**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນວິສາຫະກິດ

ເລກທີ 0123 /ກທວ

ນະຄອນຫລວງວຽງຈັນ, ວັນທີ 07 ພຶດສະພາ 2025

# ແຈ້ງການ

**ເຖິງ:** ເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ສະແກນເອກະສານສຳເນົາທະບຽນວິສາຫະກິດ ເຂົ້າລະບົບທະບຽນວິສາຫະກິດທາງເອເລັກໂຕນິກ ຫຼື eBRS.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມທະບຽນວິສາຫະກິດ ສະບັບເລກທີ 2078/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ສະບັບເລກທີ 2406/ອຄ, ລົງວັນທີ 22 ທັນວາ 2023.

ເພື່ອເຮັດໃຫ້ການຈັດເກັບເອກະສານສຳເນົາຂໍ້ມູນວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ກ່ອນການນຳໃຊ້ລະບົບທະບຽນວິສາຫະກິດທາງອີເລັກໂຕຣນິກ (eBRS) ໃຫ້ເຂົ້າໃນລະບົບຄອມພິວເຕີ (e-Document) ແນໃສ່ເຮັດໃຫ້ການນຳໃຊ້ຂໍ້ມູນວິສາຫະກິດ ມີຄວາມສະດວກ, ວ່ອງໄວ ແລະ ທັນສະໄໝ ສາມາດເຊື່ອມຖານຂໍ້ມູນວິສາຫະກິດແຫ່ງຊາດ ກັບຂະແໜງການທີ່ກ່ຽວຂ້ອງໄດ້ຢ່າງຄົບຖ້ວນ. ກົມທະບຽນວິສາຫະກິດ ແຈ້ງມາດັ່ງນີ້:

1) ໃຫ້ກວດຄືນ ເຄື່ອງສະແກນເນີ ທີ່ທາງກົມທະບຽນວິສາຫະກິດ ໄດ້ສະໜອງໃຫ້ໃນໄລຍະການຈັດຕັ້ງປະຕິບັດການຂຶ້ນທະບຽນວິສາຫະກິດ ຜ່ານລະບົບ (eBRS) ແນໃສ່ເຮັດໃຫ້ການຕິດຕັ້ງ ແລະ ການນຳໃຊ້ ເຄື່ອງດັ່ງກ່າວ ຖືກລະບົບ, ມີການຕັ້ງຄ່າມາດຕະຖານ ແລະ ມີລະບົບຈັດເກັບຂໍ້ມູນ ເປັນເອກະພາບໃນຂອບເຂດທົ່ວປະເທດ;

2) ໃຫ້ສະແກນເອກະສານສຳເນົາທະບຽນວິສາຫະກິດ (Hard Copy) ທີ່ໄດ້ເກັບຮັກສາໄວ້ໃນຖານຂໍ້ມູນທະບຽນວິສາຫະກິດຂອງຕົນ ເກັບຮັກສາແບບອີເລັກໂຕຣນິກ (Soft Copy) ໃນລະບົບຄອມພິວເຕີ ແລະ ໃນລະບົບທະບຽນວິສາຫະກິດທາງເອເລັກໂຕຣນິກ (eBRS). ຄາດໝາຍສູ້ຊົນໃຫ້ສຳເລັດໃນປີ 2025 ຫຼື ຢ່າງໜ້ອຍບໍ່ໃຫ້ຫຼຸດ 30% ຂອງເອກະສານທີ່ມີທັງໝົດ. ພາຍຫຼັງສຳເລັດການສະແກນເອກະສານແລ້ວ ໃຫ້ສົ່ງຟາຍຂໍ້ມູນດັ່ງກ່າວໃຫ້ ກົມທະບຽນວິສາຫະກິດ ເພື່ອເກັບຮັກສາລວມສູນໄວ້ໃນຖານຂໍ້ມູນວິສາຫະກິດແຫ່ງຊາດ. (ສຳລັບ ຄູ່ມືແນະນຳ ກ່ຽວກັບວິທີການຕິດຕັ້ງເຄື່ອງສະແກນ ແລະ ວິທີການສະແກນເອກະສານ ໄດ້ລົງໄວ້ຢູ່ເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ;)

3) ພ້ອມດຽວກັນນັ້ນ ຂໍແຈ້ງໃຫ້ຊາບວ່າ ຖ້າເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ມີການເຄື່ອນໄຫວວຽກງານຕິດພັນກັບວຽກທະບຽນວິສາຫະກິດ ຢາກລົງຂ່າວຜ່ານເວັບໄຊ້ຖານຂໍ້ມູນວິສາຫະກິດແຫ່ງຊາດ ແລະ ເຟສບຸກ (facebook) ຂອງກົມທະບຽນວິສາຫະກິດ ສາມາດສົ່ງຮູບການເຄື່ອນໄຫວ ແລະ ເນື້ອໃນຂ່າວ ທີ່ກ່ຽວຂ້ອງ ໃຫ້ກົມທະບຽນວິສາຫະກິດ ເພື່ອເຜີຍແຜ່ອອກສື່ມວນຊົນ ໂດຍບໍ່ໄດ້ເສຍຄ່າບໍລິການລົງຂ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ ກົມທະບຽນວິສາຫະກິດ

**ອະພິສິດ ແສງສຸລິວົງ**

**ຜູ້ປະສານພົວພັນ:**
- ທ່ານ ເມັ່ງຢາງ ປູາເບູຍຢາ, 020 22516330
- ທ່ານ ສຳເລັດ ສຸດທິປັນຍາ, 020 22071549



Scanned with CamScanner